ສາທະລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ.

ເລກທີ 1..669/ກຊນ

ຮຽນ: ທ່ານ ທອງລຸນ ສີສຸລິດ ລັດຖະມົນຕີ ກະຊວງການຕ່າງປະເທດ ພ້ອມດ້ວຍຄະນະທີ່ນັບຖືຢ່າງສູງ

ເລື່ອງ: ອວຍພອນປີໃໝ່ ແລະຂໍຄວາມກະລຸນາອະໄພຍະທານ

ເນື່ອງໃນໂອກາດຕ້ອນຮັບປີໃໝ່ລາວ ພ.ສ 2556 ທີ່ຈະມາເຖິງໃນມໍ່ໆນີ້ ຂ້າພະເຈົ້າ ນາງ. ອຶງ ຊຸຍມິງ ພ້ອມດ້ວຍຄອບຄົວ ແລະ ຍາດພີ່ນ້ອງ. ຂໍອວຍພອນອັນປະເສີດມາຍັງທ່ານຜູ້ນໍາພັກ-ລັດພ້ອມດ້ວຍໝູ່ຄະນະ ແລະຄອບຄົວຈົ່ງມີສຸຂະພາບແຂງແຮງ, ອາຍຸວັດທະນະ. ມີຄວາມຜາສຸກ ແລະ ຈົ່ງຈະເລີນຮຸ່ງເຮືອງຕະຫຼອດໄປ.

ສິ່ງທີ່ບໍ່ດີ ບໍ່ງາມທັງປວງຂໍໃຫ້ຜ່ານພົ້ນໄປກັບປີເກົ່າ ເຊັ່ນດຽວກັນ ຂ້າພະເຈົ້າພ້ອມດ້ວຍຄອບຄົວ ແລະພີ່ນ້ອງ ຂໍອະໄພຍະທານ, ຂໍອະໄພຍະໂທດ ແລະຂໍຮູ້ບຸນຄຸນມາຍັງທ່ານຜູ້ນໍາພັກ-ລັດ.

ຖ້າວ່າ ທ້າວ ສົມບັດ ສົມພອນ ຫາກມີການກະທໍາອັນໃດທີ່ຜິດພາດ ເຊິ່ງພາດພິງແຕະຕ້ອງເຖິງຄວາມສາມັກຄີ ຄວາມບໍ່ສະຫງົບ ໂດຍບໍ່ເຈດຕະນາຍ້ອນຄວາມຮູ້ເທົ່າບໍ່ເຖິງການໃນການຊ່ວຍພັດທະນາ ທີ່ແຕະຕ້ອງກັບແນວທາງຂອງພັກ-ລັດ.

ອີກເທື່ອໜຶ່ງຂໍຄວາມກະລຸນາອີ່ດູສົງສານ ແລະ ຂໍຄວາມເມດຕາຈາກທ່ານ, ເພື່ອໃຫ້ຜູ້ກ່ຽວໄດ້ກັບຄືນ ທັນສະຫລອງປີໃໝ່ ກັບຄອບຄົວ ແລະແມ່ທີ່ເຖົ້າແກ່ຊະລາ. ຂ້າພະເຈົ້າພ້ອມດ້ວຍພີ່ນ້ອງ ຂໍໃຫ້ເພິ່ນບໍານານກັບຄອບຄົວດ້ວຍຄວາມສະຫງົບ ແລະວຽກງານທາງດ້ານການເມືອງ ແມ່ນບໍ່ໄດ້ເຄື່ອນໄຫວ, ບໍ່ອອກຂ່າວທີ່ແຕະຕ້ອງເຖິງການເມືອງ ການປົກຄອງແຕ່ຢ່າງໃດ.

ຮຽນມາດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ

ບ້ານໂຄກນິນ, ວັນທີ 1/4/2013

ຜູ້ຮ້ອງຂໍ

Ng Shui Meng

ນາຍບ້ານ

ນາຍບ້ານ
ບ້ານ
ໂຄກນິນ

ສີສຸພັນ ສິງຫາລາດ